**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1995 /ອຄ.

ນະຄອນຫຼວງວຽງຈັນ, ວັນທີ 09 ກັນຍາ 2025.

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກົມອຸດສາຫະກຳປຸງແຕ່ງ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳປຸງແຕ່ງ ສະບັບເລກທີ 03079/ກອປ.ສລ, ລົງວັນທີ 05 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຈັດຕັ້ງ ສະບັບເລກທີ 301/ກຈ, ລົງວັນທີ 09 ກັນຍາ 2025.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກການຈັດຕັ້ງ, ຫຼັກການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກຂອງກົມອຸດສາຫະກຳປຸງແຕ່ງ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານອຸດສາຫະກຳປຸງແຕ່ງໃນຂອບເຂດທົ່ວປະເທດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມອຸດສາຫະກຳປຸງແຕ່ງ ຂຽນເປັນຕົວອັກສອນຫຍໍ້ວ່າ “ກອປ”, ຂຽນເປັນພາສາອັງກິດ Department of Manufacturing Industry ຂຽນຫຍໍ້ວ່າ ‘‘DOMI’’ ແມ່ນກົມວິຊາການ ສັງກັດໃນໂຄງປະກອບກົງຈັກການຈັດຕັ້ງຂອງກະຊວງອຸດສາຫະກຳ ແລະ ການຄ້າ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກຳປຸງແຕ່ງ ທຸກປະເພດ ຍົກເວັ້ນອຸດສາຫະກຳປຸງແຕ່ງແຮ່ທາດຂັ້ນຕົ້ນ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງ ແວດລ້ອມໂຮງງານ ເຮັດໃຫ້ອຸດສາຫະກຳປຸງແຕ່ງຂະຫຍາຍຕົວ ແລະ ປະກອບສ່ວນປະຕິບັດແນວທາງນະໂຍ ບາຍຂອງພັກ ແລະ ລັດຖະບານ ໃນການຫັນອຸດສາຫະກຳໃຫ້ເປັນທັນສະໄໝ, ສີຂຽວ ແລະ ຍືນຍົງ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມອຸດສາຫະກຳປຸງແຕ່ງ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ນິຕິກຳອື່ນ ຂອງຂັ້ນເທິງ ແລະ ນິຕິກຳຂອງກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເຂັ້ມງວດ;
2. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດຖະບານ ກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ມາເປັນ ແຜນງານ, ແຜນການ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
3. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ໃນແຕ່ລະໄລຍະເພື່ອສະເໜີ ລັດຖະມົນຕີ ພິຈາລະນາ;
4. ຄົ້ນຄວ້າສ້າງນະໂຍບາຍ, ນິຕິກຳ, ແຜນການ ແລະ ໂຄງການ ເພື່ອສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງທີ່ດິນອຸດສາຫະກຳ, ເຂດ ແລະ ນິຄົມອຸດສາຫະກຳ ໃນຂອບເຂດທົ່ວປະເທດ;
5. ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດແຜນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ການຜະລິດສະອາດ ແລະ ອຸດສາຫະກຳສີຂຽວ;
6. ເຜີຍແຜ່, ແນະນຳການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຕັກໂນໂລຊີເຄື່ອງຈັກອຸດສາຫະກຳ, ຂະບວນການຜະລິດ ແລະ ຜະລິດຕະພັນອຸດສາຫະກຳ, ການຜະລິດສະອາດ, ອຸດສາຫະກຳສີຂຽວ, ສິ່ງແວດລ້ອມໂຮງງານ, ວຽກງານເຄມີ ແລະ ລັງສີໂຮງງານອຸດສາຫະກຳ;
7. ຄົ້ນຄວ້າພິຈາລະນາ ອອກ, ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ, ໃບຢັ້ງຢືນການປ່ອຍມົນລະພິດໂຮງງານ, ໃບອະນຸຍາດກ່ຽວກັບເຄມີ, ໃບຢັ້ງຢືນອຸດສາຫະກຳສີຂຽວ, ໃບທະບຽນເຄື່ອງຈັກ ແລະ ໃບອະນຸຍາດກ່ຽວກັບການສ້າງຕັ້ງເຂດ ແລະ ນິຄົມອຸດສາຫະກຳ ຕາມການແບ່ງຂັ້ນຄຸ້ມຄອງ;
8. ຮັບຮອງແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ແລະ ຢັ້ງຢືນເຕັກໂນໂລຊີເຄື່ອງຈັກ, ວັດຖຸດິບ, ອຸປະກອນ ແລະ ອາໄຫຼ່ ເພື່ອຮັບໃຊ້ການຜະລິດ; ຢັ້ງຢືນເຕັກນິກຂະບວນການຜະລິດ, ຜະລິດຕະພັນອຸດສາຫະກຳ ແລະ ໂຄງປະກອບຕົ້ນທຶນການຜະລິດອຸດສາຫະກຳປຸງແຕ່ງ ຕາມການແບ່ງຂັ້ນຄຸ້ມຄອງ;
9. ຊຸກຍູ້ສົ່ງເສີມ ການສ້າງມູນຄ່າເພີ່ມ ແລະ ການນຳໃຊ້ເຕັກນິກ, ເຕັກໂນໂລຊີ, ນະວັດຕະກຳ, ຕ່ອງໂສ້ການຜະລິດ, ການຍົກລະດັບຜະລິດຕະພາບການຜະລິດ ເພື່ອໃຫ້ໄດ້ຄຸນນະພາບ ແລະ ມາດຕະຖານອຸດສາຫະກຳ;
10. ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນວຽກງານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;

11. ເກັບກຳ ແລະ ວິໄຈຂໍ້ມູນ ແລະ ສະຖິຕິດ້ານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ;
12. ຄົ້ນຄວ້າປະກອບຄຳເຫັນທາງດ້ານວິຊາການ ໃນຂົງເຂດອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ຂັ້ນເທິງ ຕາມພາລະບົດບາດຂອງກົມ;
13. ຄິດໄລ່ ແລະ ສະຫຼຸບສັງລວມ ການເກັບຄ່າທຳນຽມ ແລະ ຄ່າບໍລິການ ການອອກອະນຸຍາດຕ່າງໆຂອງກົມ ຕາມກົດໝາຍ ແລະ ລະບຽບການ;
14. ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ລວມທັງໂຮງງານທີ່ຢູ່ໃນນິຄົມອຸດສາຫະກຳ, ເຂດເສດຖະກິດພິເສດ ແລະ ເຂດອື່ນໆ ທີ່ມີການລົງທຶນດ້ານອຸດສາຫະກຳ;
15. ຕິດຕາມກວດກາ ແລະ ຄຸ້ມຄອງການນຳໃຊ້ເຄື່ອງຈັກ, ຂະບວນການຜະລິດຂອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ປະເມີນການເຄື່ອນໄຫວກິດຈະການໂຮງງານອຸດສາຫະກຳປຸງແຕ່ງ;
16. ເຂົ້າຮ່ວມເປັນຄະນະ, ກອງເລຂາຄະນະປະສານງານ ແລະ ຄະນະວິຊາການຕ່າງໆ ຕາມກົນໄກປະສານງານ ລະຫວ່າງ ກະຊວງກ່ຽວຂ້ອງ ແລະ ວິສາຫະກິດ ໃນວຽກງານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ຕາມການມອບໝາຍຂອງກະຊວງ;
17. ພົວພັນຮ່ວມມື ແລະ ປະສານງານ ກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອລະດົມຂົນຂວາຍເອົາການຮ່ວມມື, ຊ່ວຍເຫຼືອ ແລະ ສະໜັບສະໜູນ ເຂົ້າໃນການພັດທະນາວຽກງານອຸດສາຫະກຳປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກຳ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ;
18. ຂຶ້ນແຜນຄຸ້ມຄອງ ນຳໃຊ້ງົບປະມານຂອງລັດ ແລະ ໂຄງການການຊ່ວຍເຫຼືອຂອງສາກົນ, ພ້ອມທັງວັດຖຸອຸປະກອນ ແລະ ນຳໃຊ້ພາຫະນະຕ່າງໆ ໃນການເຄື່ອນໄຫວວຽກງານຂອງກົມ ຕາມລະບຽບການ ແລະ ຕາມແຜນການທີ່ໄດ້ຮັບການອະນຸມັດ;
19. ຕິດຕາມ, ປະສານງານ ແລະ ແນະນຳດ້ານວິຊາການຕາມພາລະບົດບາດຂອງກົມ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຫ້ອງການທີ່ປຶກສາເສດຖະກິດ-ການຄ້າຢູ່ຕ່າງປະເທດ;
20. ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສາມສ້າງຂອງຂະແໜງອຸດສາຫະກຳປຸງແຕ່ງ ຕາມພາລະບົດບາດຂອງກົມ;
21. ສົມທົບກັບກົມຈັດຕັ້ງ ໃນການຄົ້ນຄວ້າ ນຳສະເໜີກ່ຽວກັບວຽກຈັດຕັ້ງ, ພັກ-ພະນັກງານ ພາຍໃນກົມ;
22. ຄຸ້ມຄອງ ພະນັກງານ, ຊັບສິນຂອງລັດ ແລະ ພັດທະນາລະບົບເຄືອຂ່າຍຂໍ້ມູນຂ່າວສານ ແລະ ເວັບໄຊ ໃນຄວາມຮັບຜິດຊອບຂອງກົມ;
23. ຕິດຕາມກວດກາ, ການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
24. ປະຕິບັດໜ້າທີ່ກວດກາລັດໃນຂອບເຂດໜ້າທີ່ຄວາມຮັບຜິດຊອບຂອງກົມ ແລະ ຕາມການມອບໝາຍຂອງຂັ້ນເທິງ;

25. ສະຫຼຸບ, ລາຍງານ ການປະຕິບັດວຽກງານຂອງກົມ ປະຈໍາອາທິດ, ປະຈໍາເດືອນ, 03ເດືອນ, 06ເດືອນ, 09 ເດືອນ ແລະ ປະຈໍາປີ ເພື່ອລາຍງານລັດຖະມົນຕີ ເພື່ອຊາບ ແລະ ໃຫ້ທິດຊີ້ນໍາ;
26. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ລັດຖະມົນຕີ, ຮອງລັດຖະມົນຕີ ຫຼື ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 4 ຂອບເຂດສິດ**

ກົມອຸດສາຫະກໍາປຸງແຕ່ງ ມີຂອບເຂດສິດ ດັ່ງນີ້:

1. ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ວຽກງານອຸດສາຫະກໍາປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກໍາ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ລວມທັງໃນເຂດເສດຖະກິດພິເສດ ແລະ ເຂດອື່ນໆ ທີ່ມີການລົງທຶນດ້ານອຸດສາຫະກໍາ ຕາມກົດໝາຍ ແລະ ລະບຽບການ;
2. ອອກ, ໂຈະ ແລະ ຖອນ ໃບອະນຸຍາດກ່ຽວກັບ: ການສ້າງຕັ້ງ, ການດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກໍາ, ອຸດສາຫະກໍາສີຂຽວ, ສິ່ງແວດລ້ອມໂຮງງານ, ການດໍາເນີນທຸລະກິດກ່ຽວກັບເຄມີ, ຫ້ອງທົດລອງເຄມີ ແລະ ລັງສີໂຮງງານອຸດສາຫະກໍາ;
3. ອອກ, ໂຈະ ແລະ ຖອນ ໃບທະບຽນເຄື່ອງຈັກ, ຢັ້ງຢືນການນໍາໃຊ້ເຄື່ອງຈັກ, ຢັ້ງຢືນເຕັກນິກຂະບວນການຜະລິດ ແລະ ຮັບຮອງແຜນການເຄື່ອນໄຫວປະຈໍາປີຂອງໂຮງງານ;
4. ຢັ້ງຢືນລະບົບບໍາບັດສິ່ງເສດເຫຼືອໂຮງງານອຸດສາຫະກໍາ ແລະ ອະນຸຍາດການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ແລະ ສິ່ງເສດເຫຼືອອຸດສາຫະກໍາ;
5. ຕິດຕາມກວດກາ ການດໍາເນີນກິດຈະການໂຮງງານ ເປັນຕົ້ນ ມາດຕະຖານເຕັກນິກໂຮງງານ, ການນໍາໃຊ້ເຄື່ອງຈັກ, ອຸປະກອນ-ອາໄຫຼ່, ວັດຖຸດິບ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ໂຄງປະ ກອບຕົ້ນທຶນການຜະລິດ ແລະ ຜະລິດຕະພັນຂອງໂຮງງານອຸດສາຫະກໍາປຸງແຕ່ງ;
6. ສ້າງສະພາບແວດລ້ອມທີ່ເອື້ອອໍານວຍແກ່ການດໍາເນີນທຸລະກິດ ກ່ຽວກັບ ອຸດສາຫະກໍາປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກໍາ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ເປັນຕົ້ນ ການລົງທຶນ, ການນໍາໃຊ້ເຕັກນິກ, ເຕັກໂນໂລຊີ, ນະວັດຕະກໍາ, ມາດຕະຖານ ແລະ ຊັບສິນທາງປັນຍາ;
7. ປະສານງານ, ແນະນໍາ ແລະ ຊີ້ນໍາ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ຫ້ອງການທີ່ປຶກສາເສດຖະກິດ-ການຄ້າ ຢູ່ຕ່າງປະເທດ ໃນການຈັດຕັ້ງປະຕິບັດວຽກງານອຸດສາຫະກໍາປຸງ ແຕ່ງ, ເຂດ ແລະ ນິຄົມອຸດສາຫະກໍາ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ;
8. ທວງ ແລະ ຮັບລາຍງານສະພາບການດໍາເນີນກິດຈະການອຸດສາຫະກໍາປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກໍາ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານຈາກພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ໂຮງງານອຸດສາຫະກໍາປຸງແຕ່ງ ເພື່ອສັງລວມລາຍງານຂັ້ນເທິງ;
9. ຮ່າງນິຕິກໍາ ປະເພດຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ ແລະ ລະບຽບການທີ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ເພື່ອຄຸ້ມຄອງວຽກງານອຸດສາຫະກໍາປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກໍາ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ຕາມພາລະບົດບາດ;
10. ອອກຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ, ບົດແນະນໍາ ແລະ ຄູ່ມື ໄປຍັງພາກສ່ວນໃນສັງກັດຂອງຂະແໜງການແນໃສ່ຄຸ້ມຄອງວຽກງານວິຊາສະເພາະຂອງກົມ, ຕົກລົງ ຫຼື ລົງລາຍເຊັນ ແລະ ປະທັບຕາຂອງກົມ ໃນຂອບເຂດສິດຂອງຕົນ;

11. ພົວພັນຮ່ວມມື ແລະ ເຂົ້າຮ່ວມເປັນຄະນະ, ກອງເລຂາຄະນະປະສານງານ ແລະ ຄະນະວິຊາການຕ່າງໆ ຕາມກົນໄກປະສານງານລະຫວ່າງ ຂະແໜງການກ່ຽວຂ້ອງ, ວິສາຫະກິດ ແລະ ອົງການຈັດຕັ້ງສາກົນ;
12. ຄິດໄລ່ການເກັບຄ່າທໍານຽມ ແລະ ຄ່າບໍລິການ ການອອກອະນຸຍາດຕ່າງໆ ຕາມລັດຖະບັນຍັດ ແລະ ການປັບໃໝຜູ້ດໍາເນີນກິດຈະການທີ່ລະເມີດກົດໝາຍ ແລະ ລະບຽບການ;
13. ຮັບການລາຍງານ ແລະ ສັງລວມຂໍ້ມູນໂຮງງານ, ສ້າງຖານຂໍ້ມູນສະຖິຕິ ແລະ ດັດຊະນີການຜະລິດດ້ານອຸດສາຫະກໍາປຸງແຕ່ງ, ເຂດ ແລະ ນິຄົມອຸດສາຫະກໍາ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ;
14. ນໍາໃຊ້ງົບປະມານ, ພາຫະນະ, ວັດຖຸອຸປະກອນຮັບໃຊ້ວຽກງານທາງລັດຖະການ ແລະ ນໍາໃຊ້ເງິນໂຄງການສົ່ງເສີມວິຊາການ ທີ່ກົມເປັນພາກສ່ວນຈັດຕັ້ງປະຕິບັດ;
15. ສະເໜີກົມຈັດຕັ້ງ ໃນການຄົ້ນຄວ້າ ແລະ ນໍາສະເໜີກ່ຽວກັບວຽກຈັດຕັ້ງ, ພົກ-ພະນັກງານພາຍໃນກົມ;
16. ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນການດໍາເນີນທຸລະກິດອຸດສາຫະກໍາປຸງແຕ່ງ , ເຂດ ແລະ ນິຄົມອຸດສາຫະກໍາ, ວຽກງານເຄມີ ແລະ ສິ່ງແວດລ້ອມໂຮງງານ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
17. ຂຶ້ນແຜນງົບປະມານໃນການເຄື່ອນໄຫວວຽກງານຂອງກົມຕາມລະບຽບການ
18. ຈັດຕັ້ງປະຕິບັດ ແລະ ດໍາເນີນການກວດກາ ການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນທີ່ຢູ່ໃນການຈັດຕັ້ງຂອງຕົນເອງແຕ່ລະໄລຍະ;
19. ນໍາໃຊ້ສິດອື່ນ ຕາມການມອບໝາຍຂອງ ລັດຖະມົນຕີ, ຮອງລັດຖະມົນຕີ ຫຼື ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງກົມອຸດສາຫະກໍາປຸງແຕ່ງ ປະກອບມີ 07 ພະແນກ ແລະ 01 ສູນ ດັ່ງນີ້:

1. ພະແນກ ຄົ້ນຄວ້າ-ສັງລວມ;
2. ພະແນກ ສົ່ງເສີມອຸດສາຫະກໍາ;
3. ພະແນກ ໂຮງງານອຸດສາຫະກໍາ;
4. ພະແນກ ເຕັກໂນໂລຊີອຸດສາຫະກໍາ;
5. ພະແນກ ເຂດ ແລະ ນິຄົມອຸດສາຫະກໍາ;
6. ພະແນກ ສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກໍາ;
7. ພະແນກ ຄຸ້ມຄອງເຄມີ;
8. ສູນການຜະລິດສະອາດ ແລະ ອຸດສາຫະກໍາສີຂຽວ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ກົມອຸດສາຫະກໍາປຸງແຕ່ງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມຈໍານວນ 01 ທ່ານ, ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີຜູ້ຊີ້ນໍາຂົງເຂດວຽກງານກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງກົມ;
   ໃນເວລາຫົວໜ້າກົມຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງຮັກສາການແທນ.

2. ຮອງຫົວໜ້າກົມຈຳນວນໜຶ່ງ ຊ່ວຍຫົວໜ້າກົມຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ, ຮັບຜິດຊອບຕໍ່ຫົວໜ້າກົມກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງວຽກງານທີ່ຕົນຊີ້ນຳ;

ຮອງຫົວໜ້າກົມຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມພາຍຫຼັງກັບມາປະຈຳການ.

3. ຫົວໜ້າພະແນກ, ຫົວໜ້າສູນ, ຮອງຫົວໜ້າພະແນກ, ຮອງຫົວໜ້າສູນ ຈຳນວນໜຶ່ງ ແລະ ມີພະນັກງານວິຊາການ ຕາມການກຳນົດຕຳແໜ່ງງານຂອງຕົນທີ່ກຳນົດໄວ້.

ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

### ມາດຕາ 7 ໜ້າທີ່ຂອງພະແນກ ຄົ້ນຄວ້າ-ສັງລວມ

ພະແນກສັງລວມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃນວຽກງານຈັດຕັ້ງ-ພະນັກງານ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;
2. ປະຕິບັດວຽກງານເລຂານຸການ, ຂາເຂົ້າ-ຂາອອກ, ຄຸ້ມຄອງ ແລະ ຈໍລະຈອນແຈກຢາຍເອກະສານຂອງກົມ, ເປັນໃຈກາງລວມສູນໃນການນຳສົ່ງເອກະສານ ແລະ ໃບອະນຸຍາດຕ່າງໆທີ່ອອກຈາກກົມ ແລະ ເກັບມ້ຽນສຳເນົາເອກະສານທີ່ສຳຄັນ;
3. ຄຸ້ມຄອງ, ເກັບກຳ ແລະ ສະຫຼຸບ ເຄື່ອງໃຊ້ຫ້ອງການ ແລະ ວັດຖຸສິ່ງຂອງທີ່ເປັນຊັບສິນຂອງກົມ;
4. ຄົ້ນຄວ້າ ແລະ ນຳສະເໜີກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ບຳລຸງ, ຝຶກອົບຮົມ, ກໍ່ສ້າງ, ຍົກລະດັບ, ບັນຈຸ, ສັບຊ້ອນ, ປະຕິບັດວິໄນ ແລະ ນະໂຍບາຍ ແກ່ພະນັກງານ-ລັດຖະກອນຂອງຕົນ ໂດຍສົມທົບກັບກົມຈັດຕັ້ງ ຂອງກະຊວງ;
5. ຕິດຕາມ ແລະ ປະເມີນຜົນການປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ປະຈຳປີ, ການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ການກຳນົດຕຳແໜ່ງງານ ຂອງກົມໃຫ້ຄົບຖ້ວນ ໂດຍສົມທົບກັບກົມຈັດຕັ້ງ ຂອງກະຊວງ;
6. ຄົ້ນຄວ້າ, ສ້າງແຜນກໍ່ສ້າງຍົກລະດັບ, ຝຶກອົບຮົມ ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານພາຍໃນກົມ;
7. ເປັນໃຈກາງສົມທົບກັບບັນດາພະແນກອ້ອມຂ້າງກົມ ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ;
8. ເປັນໃຈກາງປະສານງານ ແລະ ສັງລວມວຽກງານຮ່ວມກັບບັນດາພະແນກພາຍໃນກົມ ໃນການຮ່ວມມືກັບອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
9. ຄຸ້ມຄອງຕິດຕາມ ການເຄື່ອນໄຫວວຽກງານວິຊາສະເພາະຂອງພະນັກງານພາຍໃນກົມ ຢູ່ພາຍໃນ ແລະ ຕ່າງປະເທດ;

10. ສະຫຼຸບສັງລວມການຈັດຕັ້ງປະຕິບັດວຽກງານພົ້ນເດັ່ນ, ວຽກງານສາມສ້າງ ແລະ ການເຄື່ອນໄຫວວຽກງານຂອງກົມ ປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປະຈຳປີ;
11. ຕິດຕາມ ແລະ ສັງລວມ ການສະເໜີໂຄງການ ແລະ ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ງົບປະມານພາກບໍລິຫານ ແລະ ໂຄງການຂອງພາກເອກະຊົນ ແລະ ຊ່ວຍເຫຼືອຈາກອົງການຕ່າງໆ ລວມທັງພາຍໃນ ແລະ ຕ່າງປະເທດ;
12. ຄຸ້ມຄອງ ແລະ ປັບປຸງລະບົບເຄືອຂ່າຍຂໍ້ມູນຂ່າວສານ ແລະ ເວັບໄຊ້ຂອງກົມ;
13. ສະຫຼຸບສັງລວມ ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆຂອງກົມ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ໜ້າທີ່ຂອງພະແນກ ສົ່ງເສີມອຸດສາຫະກຳ**

ພະແນກ ສົ່ງເສີມອຸດສາຫະກຳ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃນການ ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;
2. ກອງເລຂາການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ດ້ານອຸດສາຫະກຳປຸງແຕ່ງ;
3. ສ້າງກົນໄກ ແລະ ສະພາບແວດລ້ອມ ທີ່ອຳນວຍແກ່ການດຳເນີນທຸລະກິດດ້ານອຸດສາຫະກຳປຸງແຕ່ງ;
4. ສ້າງແຜນພັດທະນາອຸດສາຫະກຳປຸງແຕ່ງ, ແຜນພັດທະນາຂະແໜງອຸດສາຫະກຳຕາມທ່າແຮງ ແລະ ວາລະແຫ່ງຊາດ ແຕ່ລະໄລຍະ;
5. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ກົດຈະການບຸລິມະສິດ, ກົດຈະການສົ່ງເສີມ, ສຳປະທານ ແລະຄວບຄຸມດ້ານອຸດສາຫະກຳປຸງແຕ່ງ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາ ໃນແຕ່ລະໄລຍະ;
6. ຄົ້ນຄວ້າປະກອບຄຳເຫັນຕໍ່ການລົງທຶນດ້ານອຸດສາຫະກຳປຸງແຕ່ງ; ຄົ້ນຄວ້າການຢັ້ງຢືນ ແລະ ຮັບຮອງແຜນການເຄື່ອນໄຫວປະຈຳປີ ຂອງໂຮງງານອຸດສາຫະກຳປຸງແຕ່ງ;
7. ເກັບກຳ ແລະ ສັງລວມລາຍການຜະລິດຕະພັນ ແລະ ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ປະກອບເຂົ້າໃນໂຄງປະກອບເສດຖະກິດແຫ່ງຊາດ;
8. ຄົ້ນຄວ້າ ສ້າງ ແລະ ປະຕິບັດ ນະໂຍບາຍສົ່ງເສີມອຸດສາຫະກຳປຸງແຕ່ງ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແລະ ການພັດທະນາອຸດສາຫະກຳແບບຍືນຍົງ;
9. ສົ່ງເສີມ ການລົງທຶນດ້ານອຸດສາຫະກຳປຸງແຕ່ງ, ການຜະລິດ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ອຸດສາຫະກຳປຸງແຕ່ງກະສິກຳ ແລະ ອຸດສາຫະກຳທີ່ເປັນທ່າແຮງອື່ນ ຂອງແຕ່ລະທ້ອງຖິ່ນ;
10. ຊຸກຍູ້ສົ່ງເສີມການສ້າງຕັ້ງສະມາຄົມ, ກຸ່ມ ແລະ ເຄືອຂ່າຍຜູ້ຜະລິດ ໃນຂະແໜງອຸດສາຫະກຳປຸງແຕ່ງ ເພື່ອສ້າງຂີດຄວາມສາມາດໃນການແຂ່ງຂັນທາງດ້ານທຸລະກິດ ແລະ ເຊື່ອມໂຍງກັບຖານການຜະລິດພາກພື້ນ;
11. ປະຕິບັດວຽກງານຮ່ວມມືກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນ ໃນການຄົ້ນຄວ້າ ແລະ ພັດທະນາອຸດສາຫະກຳປຸງແຕ່ງ;
12. ຄິດໄລ່ການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ ການຢັ້ງຢືນແຜນການເຄື່ອນໄຫວປະຈຳປີ ຕາມກົດໝາຍ ແລະ ລະບຽບການ;
13. ຄົ້ນຄວ້າ, ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນການພັດທະນາວຽກງານອຸດສາຫະກຳປຸງແຕ່ງ ຕາມກົດໝາຍ ແລະ ລະບຽບການ;
14. ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນພັດທະນາອຸດສາຫະກຳປຸງແຕ່ງ ແຕ່ລະໄລຍະ;

15. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ໜ້າທີ່ຂອງພະແນກ ໂຮງງານອຸດສາຫະກຳ**

ພະແນກ ໂຮງງານອຸດສາຫະກຳ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃນການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;
2. ສ້າງ, ປັບປຸງ ແລະ ເຜີຍແຜ່ກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງຜົນຜະລິດກະສິກຳ-ປ່າໄມ້;
3. ຄົ້ນຄວ້າ ແລະ ຢັ້ງຢືນ ບົດວິພາກເສດຖະກິດ-ເຕັກນິກໂຮງງານອຸດສາຫະກຳປຸງແຕ່ງ ແລະ ກວດກາເງື່ອນໄຂດ້ານທີ່ຕັ້ງໂຮງງານ ແລະ ຕິດຕາມການກໍ່ສ້າງໂຮງງານ ແຕ່ລະໄລຍະ;
4. ຄົ້ນຄວ້າ ການອອກ, ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງໂຮງງານ, ໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ອຸດສາຫະກຳປຸງແຕ່ງຜົນຜະລິດກະສິກຳ-ປ່າໄມ້;
5. ຕິດຕາມກວດກາ ເຕັກນິກໂຮງງານ, ກວດກາການເຄື່ອນໄຫວຂອງໂຮງງານອຸດສາຫະກຳປຸງແຕ່ງ ຕາມປົກກະຕິ, ຕາມການຮ້ອງຟ້ອງ, ຕາມການສະເໜີ ແລະ ການເກີດອຸປະຕິເຫດໂຮງງານ;
6. ປັບປຸງ ແລະ ດັດສົມໂຮງງານອຸດສາຫະກຳປຸງແຕ່ງທຸກປະເພດ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
7. ເກັບກຳບັນຊີເຄື່ອງຈັກ ແລະ-ຄິດໄລ່ແຮງມ້າປຽບທຽບເຄື່ອງຈັກ ຂອງໂຮງງານອຸດສາຫະກຳປຸງແຕ່ງ;
8. ໃຫ້ຄຳປຶກສາ ແລະ ຈັດຝຶກອົບຮົມທາງດ້ານວິຊາການ ກ່ຽວກັບວຽກງານຄຸ້ມຄອງໂຮງງານ ໃຫ້ແກ່ພະນັກງານ ແລະ ຜູ້ປະກອບການ;
9. ຄິດໄລ່ການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ ການອອກໃບອະນຸຍາດສ້າງຕັ້ງໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມກົດໝາຍ ແລະ ລະບຽບການ;
10. ຄົ້ນຄວ້າ, ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນການດຳເນີນກິດຈະການໂຮງງານ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
11. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ແກ້ໄຂບັນຫາການຮ້ອງຟ້ອງ, ຮ້ອງທຸກ, ຂໍ້ຂັດແຍ່ງທີ່ເກີດຈາກການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ;
12. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ;
13. ເກັບກຳຂໍ້ມູນສະຖິຕິໂຮງງານອຸດສາຫະກຳປຸງແຕ່ງ, ພັດທະນາ ແລະ ຄຸ້ມຄອງລະບົບຖານຂໍ້ມູນໂຮງງານອຸດສາຫະກຳປຸງແຕ່ງ ໃນທົ່ວປະເທດ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ໜ້າທີ່ຂອງພະແນກ ເຕັກໂນໂລຊີອຸດສາຫະກຳ**

ພະແນກ ເຕັກໂນໂລຊີອຸດສາຫະກຳ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃນການສົ່ງເສີມ ແລະ ພັດທະນາວຽກງານເຕັກໂນໂລຊີ ແລະ ເຄື່ອງຈັກອຸດສາຫະກຳ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;

2. ສ້າງ, ປັບປຸງ ແລະ ເຜີຍແຜ່ກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບການສົ່ງເສີມ ແລະ ພັດທະນາ ວຽກງານເຕັກໂນໂລຊີ ແລະ ເຄື່ອງຈັກອຸດສາຫະກຳ;
3. ຄົ້ນຄວ້າ ການອອກ, ໂຈະ ແລະ ຖອນ ໃບທະບຽນເຄື່ອງຈັກ, ໃບຢັ້ງຢືນເຕັກນິກຂະບວນການຜະລິດ ແລະ ຜະລິດຕະພັນໂຮງງານອຸດສາຫະກຳປຸງແຕ່ງ;
4. ຄິດໄລ່ການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ ການອອກອະນຸຍາດຕໍ່ກັບວຽກງານການຂຶ້ນທະບຽນເຄື່ອງຈັກ, ຢັ້ງຢືນແຜນຄວາມຕ້ອງການນຳເຂົ້າເຄື່ອງຈັກ ຕາມກົດໝາຍ ແລະ ລະບຽບການ;
5. ຕິດຕາມກວດກາການນຳໃຊ້ເຄື່ອງຈັກ, ອຸປະກອນ-ອາໄຫຼ່, ວັດຖຸດິບ, ມາດຕະຖານເຕັກນິກຂະບວນການຜະລິດ, ໂຄງປະກອບຕົ້ນທຶນການຜະລິດ ແລະ ຜະລິດຕະພັນຂອງໂຮງງານອຸດສາຫະກຳປຸງແຕ່ງ;
6. ສົ່ງເສີມການທົດລອງ, ການວິໄຈການພັດທະນາຜະລິດຕະພັນອຸດສາຫະກຳ;
7. ຄຸ້ມຄອງສະຫຼາກຜະລິດຕະພັນອຸດສາຫະກຳ;
8. ປະຕິບັດວຽກງານການສົ່ງເສີມ, ການພັດທະນາ ຄຸນນະພາບຜະລິດຕະພັນ ແລະ ມາດຕະຖານອຸດສາຫະກຳ;
9. ປະຕິບັດວຽກງານໃນຄະນະກຳມະການເຕັກນິກແຫ່ງຊາດ, ໜ່ວຍງານວິຊາການດ້ານເຕັກນິກມາດຕະຖານອາຊຽນ ແລະ ສາກົນ ໃນວຽກງານອຸດສາຫະກຳປຸງແຕ່ງ;
10. ສົ່ງເສີມ ແລະ ພັດທະນາການສ້າງສູນຮຽນຮູ້, ຖ່າຍທອດເຕັກໂນໂລຊີ, ການສ້າງມູນຄ່າເພີ່ມ, ການນຳໃຊ້ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳທີ່ເໝາະສົມເຂົ້າໃນຂະບວນການຜະລິດ;
11. ຝຶກອົບຮົມດ້ານເຕັກນິກການຜະລິດ ແລະ ການສ້າງມູນຄ່າເພີ່ມ ດ້ານອຸດສາຫະກຳປຸງແຕ່ງ;
12. ໃຫ້ຄຳປຶກສາ ແລະ ຝຶກອົບຮົມທາງດ້ານວິຊາການກ່ຽວກັບວຽກງານຊັບສິນທາງປັນຍາ, ມາດຕະຖານ ແລະ ຄຸນນະພາບ ດ້ານອຸດສາຫະກຳປຸງແຕ່ງ ເປັນຕົ້ນ 5ສ (5S), ຫຼັກການຜະລິດທີ່ດີ (GMP), ມາດຕະຖານສາກົນ (ISO) ແລະ ອື່ນໆ;
13. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມ ແລະ ພັດທະນາ ເຕັກໂນໂລຊີ, ນະວັດຕະກຳ ແລະ ເຄື່ອງຈັກອຸດສາຫະກຳ;
14. ຄົ້ນຄວ້າ ແລະ ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນການພັດທະນາເຕັກໂນໂລຊີ, ເຄື່ອງຈັກອຸດສາຫະກຳ ແລະ ນະວັດຕະກຳທີ່ເໝາະສົມ ເຂົ້າໃນອຸດສາຫະກຳປຸງແຕ່ງ ແລະ ປະຕິບັດມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
15. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ໜ້າທີ່ຂອງພະແນກ ເຂດ ແລະ ນິຄົມອຸດສາຫະກຳ**

ພະແນກເຂດ ແລະ ນິຄົມອຸດສາຫະກຳ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃນວຽກງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກຳ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ກໍຄືນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;
2. ສ້າງ, ປັບປຸງ ແລະ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ເຂດ ແລະ ນິຄົມອຸດສາຫະກຳ;
3. ຄົ້ນຄວ້າ ແລະ ກຳນົດນະໂຍບາຍ ກ່ຽວກັບການພັດທະນາລະບົບສາທາລະນຸປະໂພກ ແລະ ສິ່ງອຳນວຍຄວາມສະດວກທີ່ຈຳເປັນແກ່ການລົງທຶນດ້ານອຸດສາຫະກຳປຸງແຕ່ງ ໃນເຂດ ແລະ ນິຄົມອຸດສາຫະກຳ;

4. ຮັບຮອງບົດສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງ ແລະ ກໍານົດເຂດພັດທະນານິຄົມອຸດສາຫະກໍາ;
5. ຄົ້ນຄວ້າ ການອອກ, ໂຈະ ແລະ ຖອນໃບອະນຸຍາດສ້າງຕັ້ງເຂດ ແລະ ນິຄົມອຸດສາຫະກໍາ;
6. ຄົ້ນຄວ້າ ແລະ ສ້າງຄູ່ມື ດ້ານມາດຕະຖານເຕັກນິກ ກ່ຽວກັບການຈັດສັນພື້ນທີ່, ການອອກແບບ ຫຼື ວາງລະບົບແຜນຜັງ ແລະ ຂັ້ນຕອນການສ້າງຕັ້ງເຂດ ແລະ ນິຄົມອຸດສາຫະກໍາ ແລະ ເຂດອື່ນໆ ທີ່ມີການລົງທຶນດ້ານອຸດສາຫະກໍາ;
7. ພົວພັນ ແລະ ຮ່ວມມືກັບຂະແໜງການກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ກ່ຽວກັບການຄຸ້ມຄອງການນໍາໃຊ້ທີ່ດິນອຸດສາຫະກໍາ ແລະ ການພັດທະນາເຂດ ແລະ ນິຄົມອຸດສາຫະກໍາ ຕາມທ່າແຮງ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ;
8. ປະສານສົມທົບ ຕິດຕາມການຈັດຕັ້ງປະຕິບັດວຽກງານຫ້ອງການຄຸ້ມຄອງ ແລະ ບໍລິຫານນິຄົມອຸດສາຫະກໍາ ໃນການບໍລິການ ແລະ ອໍານວຍຄວາມສະດວກການລົງທຶນ ຕາມກົນໄກບໍລິການປະຕູດຽວ;
9. ຊຸກຍູ້ສົ່ງເສີມ ແລະ ສະໜັບສະໜູນນັກທຸລະກິດ ຫຼື ອົງການຈັດຕັ້ງສາກົນ ເຂົ້າຮ່ວມໃນການສ້າງ ແລະ ພັດທະນາເຂດ ແລະ ນິຄົມອຸດສາຫະກໍາ ແລະ ດຶງດູດການລົງທຶນດ້ານອຸດສາຫະກໍາປຸງແຕ່ງ;
10. ເຈລະຈາ ແລະ ສ້າງບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການສຶກສາ, ສໍາຫຼວດຄວາມເປັນໄປໄດ້ໃນການກໍານົດເຂດ ແລະ ພັດທະນານິຄົມອຸດສາຫະກໍາ;
11. ປະກອບຄໍາເຫັນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດອື່ນໆ ທີ່ມີການລົງທຶນດ້ານອຸດສາຫະກໍາ;
12. ໃຫ້ຄໍາປຶກສາ, ບໍລິການ ແລະ ຈັດຝຶກອົບຮົມທາງດ້ານວິຊາການ ກ່ຽວກັບວຽກງານເຂດ ແລະ ນິຄົມອຸດສາຫະກໍາ;
13. ຄົ້ນຄວ້າ, ສະເໜີ ປະຕິບັດນະໂຍບາຍ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານດີເດັ່ນໃນວຽກງານເຂດ ແລະ ນິຄົມອຸດສາຫະກໍາ ແລະ ປະຕິບັດມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ;
14. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ແກ້ໄຂບັນຫາການຮ້ອງຟ້ອງ, ຮ້ອງທຸກ, ຂໍ້ຂັດແຍ່ງໃນວຽກງານເຂດ ແລະ ນິຄົມອຸດສາຫະກໍາ;
15. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກໍາ;
16. ຄຸ້ມຄອງ, ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກໍາ;
17. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 12 ໜ້າທີ່ຂອງພະແນກ ສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກໍາ**

ພະແນກ ສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກໍາ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ການຄ້າ ໃນການສົ່ງເສີມ ແລະ ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກໍາ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;
2. ສ້າງ, ປັບປຸງ ແລະ ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກໍາ;
3. ສ້າງບັນຊີສິ່ງເສດເຫຼືອອັນຕະລາຍ ໃນໂຮງງານອຸດສາຫະກໍາປຸງແຕ່ງ;
4. ສຶກສາຄົ້ນຄວ້າ ແລະ ກໍານົດວິທີການປ້ອງກັນ, ແກ້ໄຂ ແລະ ຫຼຸດຜ່ອນຄວາມສ່ຽງດ້ານສິ່ງແວດລ້ອມ,

ຄວາມປອດໄພອຸດສາຫະກຳ ແລະ ການຄຸ້ມຄອງສິ່ງເສດເຫຼືອອັນຕະລາຍ ພ້ອມທັງກຳນົດແຜນຟື້ນຟູສິ່ງແວດລ້ອມໂຮງງານ;

5. ໃຫ້ຄຳປຶກສາ ແລະ ຈັດຝຶກອົບຮົມທາງດ້ານວິຊາການ ກ່ຽວກັບວຽກງານສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ ໃຫ້ແກ່ພະນັກງານ ແລະ ຜູ້ປະກອບການ;
6. ກຳນົດ ແລະ ວາງແຜນສ້າງເຂດກຳຈັດ ແລະ ບຳບັດສິ່ງເສດເຫຼືອອັນຕະລາຍຈາກໂຮງງານອຸດສາຫະກຳປຸງແຕ່ງ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
7. ຄົ້ນຄວ້າ ການອອກ, ໂຈະ ແລະ ຖອນ, ແຜນຜັງເຕັກນິກລະບົບບຳບັດ, ໃບອະນຸຍາດການປ່ອຍມົນລະພິດ, ໃບຢັ້ງຢືນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສິ່ງເສດເຫຼືອອັນຕະລາຍ ແລະ ສິ່ງເສດເຫຼືອທົ່ວໄປຂອງໂຮງງານອຸດສາຫະກຳປຸງແຕ່ງ;
8. ຄົ້ນຄວ້າສະເໜີດັດແກ້, ໂຈະ, ຍົກຍ້າຍ ແລະ ຖອນໃບຢັ້ງຢືນ ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ທີ່ກໍ່ໃຫ້ເກີດຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ສັງຄົມ;
9. ສ້າງ ແລະ ພັດທະນາ ຫ້ອງທົດລອງ, ຖານຂໍ້ມູນ, ລະບົບຕິດຕາມກວດກາມົນລະພິດທາງອີເລັກໂຕຣນິກ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ;
10. ຕິດຕາມກວດກາ, ວັດແທກ, ເກັບຕົວຢ່າງ ແລະ ວິໄຈ ຄຸນນະພາບສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານອຸດສາຫະກຳປຸງແຕ່ງ;
11. ສົ່ງເສີມການຈັດຕັ້ງປະຕິບັດລະບົບມາດຕະຖານດ້ານສິ່ງແວດລ້ອມ ແລະ ລະບົບຄຸ້ມຄອງສິ່ງແວດລ້ອມປະຈຳໂຮງງານອຸດສາຫະກຳປຸງແຕ່ງ;
12. ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງໂຮງງານອຸດສາຫະກຳປຸງແຕ່ງ;
13. ຄິດໄລ່ການເກັບຄ່າທຳນຽມ ແລະ ຄ່າບໍລິການ ການອອກອະນຸຍາດກ່ຽວກັບວຽກງານສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ ຕາມກົດໝາຍ ແລະ ລະບຽບການ;
14. ຄົ້ນຄວ້າ, ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານດີເດັ່ນໃນການຮັກສາສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ ແລະ ປະຕິບັດມາດຕະການຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ;
15. ຄົ້ນຄວ້າ ແລະ ແກ້ໄຂບັນຫາການຮ້ອງຟ້ອງ, ຮ້ອງທຸກ, ຂໍ້ຂັດແຍ່ງກ່ຽວກັບວຽກງານສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ;
16. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນວຽກງານສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ;
17. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 13 ໜ້າທີ່ຂອງພະແນກ ຄຸ້ມຄອງເຄມີ**

ພະແນກ ຄຸ້ມຄອງເຄມີ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ໃນການສົ່ງເສີມ ແລະ ຄຸ້ມຄອງວຽກງານເຄມີແຫ່ງຊາດ ແລະ ລັງສີໂຮງງານອຸດສາຫະກຳ ແບບລວມສູນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;
2. ສ້າງ, ປັບປຸງ ແລະ ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມ

ຄອງເຄມີແຫ່ງຊາດ ແລະ ລັງສີໂຮງງານອຸດສາຫະກໍາ;

3. ຄົ້ນຄວ້າ ການອອກ, ໂຈະ ແລະ ຖອນ ໃບອະນຸຍາດດໍາເນີນທຸລະກິດກ່ຽວກັບເຄມີ, ໃບອະນຸຍາດດໍາເນີນທຸລະກິດບໍລິການທີ່ປຶກສາດ້ານຄວາມປອດໄພເຄມີ, ໃບທະບຽນບັນຊີເຄມີ, ໃບອະນຸຍາດສ້າງຕັ້ງຫ້ອງທົດລອງເຄມີ, ໃບອະນຸຍາດນໍາເຂົ້າ, ສົ່ງອອກ, ສົ່ງຜ່ານເຄມີ, ຮັບຮອງແຜນປ້ອງກັນ ແລະ ແກ້ໄຂອຸປະຕິເຫດທາງເຄມີ ແລະ ລັງສີໂຮງງານອຸດສາຫະກໍາ;
4. ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງການຕິດສະຫຼາກ, ຈັດປະເພດ ແລະ ການກໍານົດຂໍ້ມູນຄວາມປອດໄພທາງເຄມີ ແລະ ລັງສີໂຮງງານອຸດສາຫະກໍາ;
5. ສ້າງ ແລະ ພັດທະນາຫ້ອງທົດລອງເຄມີ, ຖານຂໍ້ມູນເຄມີແຫ່ງຊາດ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານເຄມີ ແລະ ລັງສີໂຮງງານອຸດສາຫະກໍາ;
6. ສຶກສາ, ວິໄຈ ປະເມີນຄວາມສ່ຽງຂອງເຄມີ ທີ່ເປັນຜົນກະທົບຕໍ່ສຸຂະພາບ, ສິ່ງແວດລ້ອມ ແລະ ສັງຄົມ;
7. ຄຸ້ມຄອງ, ຕິດຕາມກວດກາ ການດໍາເນີນທຸລະກິດ, ການນໍາໃຊ້ເຄມີ ແລະ ລັງສີໂຮງງານອຸດສາຫະກໍາ;
8. ອາຍັດ, ຍຶດ ເຄມີ ທີ່ຜະລິດ, ເກັບຮັກສາ, ຄອບຄອງ, ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈໍາໜ່າຍ ແລະ ນໍາໃຊ້ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
9. ຄິດໄລ່ການເກັບຄ່າທໍານຽມ ແລະ ຄ່າບໍລິການການອອກອະນຸຍາດກ່ຽວກັບວຽກງານເຄມີ ຕາມກົດໝາຍ ແລະ ລະບຽບການ;
10. ໃຫ້ຄໍາປຶກສາ ແລະ ຈັດຝຶກອົບຮົມດ້ານວິຊາການ ກ່ຽວກັບວຽກງານເຄມີ ແລະ ລັງສີໂຮງງານອຸດສາຫະກໍາ ໃຫ້ແກ່ພະນັກງານ ແລະ ຜູ້ປະກອບການ;
11. ຄົ້ນຄວ້າ, ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍ ຕໍ່ຜູ້ມີຜົນງານດີເດັ່ນໃນວຽກງານເຄມີ ແລະ ລັງສີໂຮງງານອຸດສາຫະກໍາ ແລະ ປະຕິບັດມາດຕະການຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ;
12. ແກ້ໄຂຂໍ້ຂັດແຍ່ງກ່ຽວກັບເຄມີ, ການຕອບໂຕ້ອຸປະຕິເຫດທາງເຄມີ ແລະ ລັງສີໂຮງງານອຸດສາຫະກໍາ ໂດຍສົມທົບກັບຂະແໜງການກ່ຽວຂ້ອງ;
13. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງເຄມີ ແລະ ລັງສີໂຮງງານອຸດສາຫະກໍາ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

### ມາດຕາ 14 ໜ້າທີ່ຂອງສູນການຜະລິດສະອາດ ແລະ ອຸດສາຫະກໍາສີຂຽວ

ສູນການຜະລິດສະອາດ ແລະ ອຸດສາຫະກໍາສີຂຽວລາວ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ຜັນຂະຫຍາຍແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ການຄ້າ ໃນວຽກງານສົ່ງເສີມ ແລະ ພັດທະນາ ການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກໍາສີຂຽວ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ;
2. ສ້າງ, ປັບປຸງ ແລະ ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ຄູ່ມື ກ່ຽວກັບການສົ່ງເສີມ ແລະ ພັດທະນາການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກໍາສີຂຽວ;
3. ພັດທະນາຫຼັກສູດຝຶກອົບຮົມ ເພື່ອຊຸກຍູ້ສົ່ງເສີມ ແລະ ໃຫ້ການຊ່ວຍເຫຼືອດ້ານການຜະລິດສະອາດ, ຜະລິດຕະພາບການຜະລິດ ເປັນຕົ້ນ ການນໍາໃຊ້ຊັບພະຍາກອນ ແລະ ພະລັງງານຢ່າງມີປະສິດທິພາບ ແລະ ອຸດສາຫະກໍາສີຂຽວ;
4. ສ້າງຄວາມເຂັ້ມແຂງ ແລະ ຈິດສໍານຶກ ກ່ຽວກັບການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ

ອຸດສາຫະກຳສີຂຽວ ໃຫ້ແກ່ພະນັກງານ ແລະ ຜູ້ປະກອບການອຸດສາຫະກຳປຸງແຕ່ງ;

5. ໃຫ້ຄຳປຶກສາ, ແນະນຳ ແລະ ບໍລິການດ້ານເຕັກນິກກ່ຽວກັບການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ທຸລະກິດອື່ນ;
6. ເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນສະຖິຕິ, ສະໜອງຂໍ້ມູນສະຖິຕິ ແລະ ຂ່າວສານ ກ່ຽວກັບການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວ ໃນຂອບເຂດທົ່ວປະເທດ;
7. ປະສານງານ ແລະ ສ້າງເຄືອຂ່າຍທັງພາຍໃນ ແລະ ຕ່າງປະເທດ ໃນຂົງເຂດວຽກງານການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວ ລວມທັງການຖ່າຍທອດ ແລະ ຮັບເອົາເຕັກໂນໂລຊີສະອາດ;
8. ຄຸ້ມຄອງ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວ ໃນຂອບເຂດທົ່ວປະເທດ;
9. ຄົ້ນຄວ້າ ການອອກ, ໂຈະ ແລະ ຖອນ ໃບຢັ້ງຢືນອຸດສາຫະກຳສີຂຽວ ແລະ ໃບຢັ້ງຢືນສະຫຼາກສີຂຽວ;
10. ໃຫ້ການບໍລິການດ້ານເຕັກນິກ ກ່ຽວກັບວຽກງານການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວ;
11. ໃຫ້ການບໍລິການວັດແທກ, ເກັບຕົວຢ່າງ, ວິໄຈ ແລະ ຢັ້ງຢືນຜົນການວັດແທກ ຕາມການສະເໜີຂອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫົວໜ່ວຍທຸລະກິດ;
12. ຄິດໄລ່ການເກັບຄ່າທຳນຽມ ແລະ ຄ່າບໍລິການ ການອອກອະນຸຍາດກ່ຽວກັບວຽກງານສູນການຜະລິດສະອາດ ຕາມກົດໝາຍ ແລະ ລະບຽບການ;
13. ຄົ້ນຄວ້າ, ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານດີເດັ່ນ ໃນດ້ານການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວ ແລະ ປະຕິບັດມາດຕະການຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ;
14. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການສົ່ງເສີມ ແລະ ພັດທະນາ ການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວ;
15. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານການຜະລິດສະອາດ, ຜະລິດຕະພາບການຜະລິດ ແລະ ອຸດສາຫະກຳສີຂຽວ ໃນຂອບເຂດທົ່ວປະເທດ;
16. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 15 ຫຼັກການ

ກົມອຸດສາຫະກຳປຸງແຕ່ງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການສູນລວມປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ທຸກລະດັບ, ນຳໃຊ້ຄວາມຮູ້ຄວາມສາມາດຂອງຕົນຢ່າງສຸດຂີດ ເພື່ອເຮັດຫຼ້ອນໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວວຽກງານ ຂອງກົມ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບ

ການ ແລະ ຫຼັກການລວມຂອງພັກ ແລະ ລັດຖະບານ ນໍາເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ຍຸດທະສາດ ແລະ ແຜນພັດທະນາຂອງຂະແໜງການ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 16 ແບບແຜນວິທີເຮັດວຽກ**

ກົມອຸດສາຫະກໍາປຸງແຕ່ງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ ປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງກົມກຽວກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະ ກັນໃຫ້ພາລະບົດບາດ ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດການລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈໍາເດືອນ, ໄຕມາດ, 6 ເດືອນ, ປະຈໍາປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງ ແລະ ລັດຖະບານ ເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 17 ງົບປະມານ ແລະ ຕາປະທັບ**

ກົມອຸດສາຫະກໍາປຸງແຕ່ງ ມີງົບປະມານ ແລະ ຕາປະທັບ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ການຈັດຕັ້ງປະຕິບັດ**

ກົມອຸດສາຫະກໍາປຸງແຕ່ງ, ຫ້ອງການ, ບັນດາກົມ, ສໍານັກງານ ແລະ ສະຖາບັນ ອ້ອມຂ້າງກະຊວງອຸດສາຫະກໍາ ແລະ ການຄ້າ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ລັດຖະມົນຕີ

ມະໄລທອງ ກົມມະສິດ